ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້

ກອງທຶນຫລຸດຜ່ອນຄວາມທຸກຍາກ (ທລຍ) — ເລກທີ 0653/ທລຍ

ນະຄອນຫລວງວຽງຈັນ, ວັນທີ 18 ພຶດສະພາ 2020

# ໜັງສືເຊີນເຂົ້າຮ່ວມປະມູນສົມທຽບລາຄາ

ສຳລັບການຈັດພິມປື້ມບັນທຶກ, ຕິດຕາມ, ລາຍງານ, ແລະ ສະຫລຸບ

ສັນຍາເລກທີ: PRF.III-AF/Record-Books/G-S/2020 (AF-G-005)

ເຖິງ: ______________________________

1. ລັດຖະບານ ສປປ ລາວ ໄດ້ຮັບທຶນກູ້ຢືມ ຈາກສະມາຄົມພັດທະນາສາກົນ (IDA) ຂອງທະນາຄານໂລກ ແລະ ອົງການເພື່ອການພັດທະນາ ແລະ ການຮ່ວມມື ສະວິດເຊີແລນ (SDC) ເພື່ອຈັດຕັ້ງປະຕິບັດໂຄງການກອງທຶນຫລຸດຜ່ອນຄວາມທຸກຍາກ III - ໄລຍະທຶນເພີ່ມ ແລະ ມີຈຸດປະສົງທີ່ຈະນຳໃຊ້ທຶນສ່ວນໜຶ່ງ ເຂົ້າໃນການຈັດພິມປື້ມບັນທຶກ, ຕິດຕາມ, ລາຍງານ, ແລະ ສະຫລຸບ, ດ້ວຍການສະເໜີໃຫ້ຍື່ນຊອງປະມູນເພື່ອສົມທຽບລາຄາ.
2. ກອງທຶນຫລຸດຜ່ອນຄວາມທຸກຍາກ ຂໍເຊີນໂຮງພິມຂອງທ່ານ ເຂົ້າຍື່ນຊອງສົມທຽບລາຄາ ສຳລັບການຈັດພິມປື້ມດັ່ງກ່າວຂ້າງເທິງ, ໄລຍະເວລາໃນການສົ່ງມອບແມ່ນ 45 ວັນ. ຕາຕະລາງລາຍການລະອຽດຂອງສິ່ງພິມມີດັ່ງລຸ່ມນີ້:

| ລ/ດ | ລາຍການສິ່ງພິຫມ | ຫົວ ໜ່ວຍ | ຈຳນວນ | ກຳນົດ ຈັດສົ່ງ | ສະຖານທີ່ ຈັດສົ່ງ |
|---|---|---|---|---|---|
| 1 | ປຶ້ມຕິດຕາມເງິນຝາກ-ປ່ອຍກູ້ ປະຈຳຕົວ ສະມາຊິກ | ຫົວ | 15.000 (24 ໜ້າ) | 45 ວັນ | ຫ້ອງການ ທລຍ ແຕ່ລະແຂວງ ຕາມແຜນແບ່ງປັນ (ຜົ້ງສາລີ, ອຸດົມໄຊ, ຫົວພັນ, ແລະ ຊຽງຂວາງ) |
| 2 | ປຶ້ມບັນຊີເງິນສົດ | ຫົວ | 300 (28 ໜ້າ) | | |
| 3 | ປຶ້ມລາຍງານຜົນໄດ້ຮັບ | ຫົວ | 300 (28 ໜ້າ) | | |
| 4 | ປຶ້ມສະຫລຸບຊັບສົມບັດ | ຫົວ | 300 (28 ໜ້າ) | | |
| 5 | ປຶ້ມບັນທຶກກອງປະຊຸມ ຄບກ | ຫົວ | 300 (39 ໜ້າ) | | |
| 6 | ປຶ້ມບັນທຶກກອງປະຊຸມ ກຊກ | ຫົວ | 1.500 (51 ໜ້າ) | | |
| 7 | ປຶ້ມຕິດຕາມເງິນຝາກ | ຫົວ | 300 (28 ໜ້າ) | | |
| 8 | ປຶ້ມຕິດຕາມບັນຊີການປ່ອຍກູ້ ແລະ ເກັບກູ້ທຶນຄືນ | ຫົວ | 300 (28 ໜ້າ) | | |
| 9 | ປຶ້ມ 5 ບັນຊີເງິນສົດ ແລະ ແຍກປະເພດ | ຫົວ | 300 (28 ໜ້າ) | | |
| 10 | ປຶ້ມບັນຊີເງິນສົດ (ໂພຊະນາການ) | ຫົວ | 251 (27 ໜ້າ) | | |
| 11 | ປຶ້ມບັນທຶກບັນຊີເຂົ້າສາງ (ໂພຊະນາການ) | ຫົວ | 251 (99 ໜ້າ) | | |
| 12 | ປຶ້ມລົງທະບຽນປະຈຳເດືອນ ຂອງສະມາຊິກ ກພກ | ຫົວ | 251 (27 ໜ້າ) | | |

3. ການປະມູນນີ້ ຈະດຳເນີນຕາມຂັ້ນຕອນການປະມູນສົມທຽບລາຄາ ທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄຳແນະນຳ ກ່ຽວກັບການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ, ສະບັບເລກທີ 0047/ກງ, ລົງວັນທີ 13 ກຸມພາ 2019.

4. ຊອງສະເໜີລາຄາ ຈະຕ້ອງສົ່ງກ່ອນເວລາ 15:00 ໂມງ ຂອງວັນທີ 8/06/2020 ຢູ່ທີ່ຫ້ອງການກອງທຶນຫລຸດຜ່ອນ ຄວາມທຸກຍາກ, ແລະ ຊອງປະມູນທຸກໆຊອງ ຈະໄດ້ເປີດໃນເວລາ 15:00 ໂມງ, ຂອງວັນທີ 8/06/2020 ຢູ່ທີ່ຫ້ອງການ ທລຍ ຕັ້ງຢູ່ໃນຫ້ອງການລັດຖະບານ, ຖະໜົນ ສີສະຫວາດ, ບ້ານ ນາໄຮ່ດຽວ, ເມືອງ ຈັນທະບູລີ, ນະຄອນຫລວງວຽງ ຈັນ, ສປປ ລາວ.

5. ທ່ານສາມາດສອບຖາມຂໍ້ມູນເພີ້ມເຕີມ ໄດ້ທີ່ຫ້ອງການ ທລຍ, ຕາມວັນ ແລະ ເວລາເຮັດວຽກ ໂທ: 261479-80 (ຕໍ່ 105).

ກອງທຶນຫລຸດຜ່ອນຄວາມທຸກຍາກ,

ຜູ້ອຳນວຍການບໍລິຫານ ທລຍ

ຈິດ ທະວີໃສ